ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

--------------------------

ສະພາແຫ່ງຊາດ ຊຸດທີ VII

ເລກທີ 10 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 24 ມິຖຸນາ 2011

# ມະຕິກອງປະຊຸມ

## ຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ VII

--------------------------

ກອງປະຊຸມຄັ້ງປະຖົມມະລຶກ ຂອງສະພາແຫ່ງຊາດ ຊຸດທີ VII ໄດ້ດຳເນີນຂຶ້ນ ລະຫວ່າງວັນທີ 15 - 24 ມິຖຸນາ 2011 ທີ່ຫໍສະພາແຫ່ງຊາດ, ນະຄອນຫຼວງວຽງຈັນ ພາຍໃຕ້ການເປັນປະທານຂອງທ່ານ ນາງ ປານີ ຢາທໍ່ຕູ້ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ. ເຂົ້າຮ່ວມກອງປະຊຸມຄັ້ງນີ້ມີສະມາຊິກສະພາແຫ່ງຊາດ ຈາກເຂດເລືອກຕັ້ງຕ່າງໆໃນທົ່ວປະເທດຈຳນວນ 129 ທ່ານ , ຍິງ 32 ທ່ານ.( ຈຳນວນສະມາຊິກສະພາແຫ່ງຊາດທັງໝົດ 132 ທ່ານ, ຍິງ 33 ທ່ານ )

ກອງປະຊຸມໄດ້ເປັນກຽດຕ້ອນຮັບ ພະນະທ່ານ ຈູມມາລີ ໄຊຍະສອນ ເລຂາທິການໃຫຍ່ຄະນະບໍລິຫານສູນກາງພັກ, ປະທານປະເທດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ບັນດາທ່ານກຳມະການກົມການເມືອງສູນກາງພັກ, ຄະນະລັດຖະບານ, ປະທານສານປະຊາຊົນສູງສຸດ, ຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ຜູ້ຕາງໜ້າອົງການແນວລາວສ້າງຊາດ, ບັນດາອົງການຈັດຕັ້ງມະຫາຊົນຂັ້ນສູນກາງ, ອະດີດສະມາຊິກສະພາແຫ່ງຊາດ, ຕົວແທນບັນດາຊັ້ນຄົນ, ປັນຍາຊົນ, ພະນັກງານອາວຸໂສ, ຜູ້ຊົງຄຸນວຸດທິ, ນັກທຸລະກິດ, ບັນດາທູຕານຸທູດ ແລະຕົວແທນບັນດາອົງການຈັດຕັ້ງສາກົນປະຈຳ ສປປ ລາວ.

ໃນກອງປະຊຸມ, ບັນດາທ່ານສະມາຊິກສະພາແຫ່ງຊາດ ໄດ້ສຸມສະຕິປັນຍາ ແລະຄວາມຮັບຜິດຊອບການເມືອງອັນສູງ ສົ່ງຄົ້ນຄ້ວາພິຈາລະນາ ແລະຮັບຮອງເອົາບັນຫາສຳຄັນຂອງຊາດດ້ວຍຄະແນນສຽງສ່ວນຫຼາຍ ເຊິ່ງມີລາຍລະອຽດດັ່ງນີ້:

I. ຮັບຮອງເອົາຜົນສຳເລັດຂອງການເລືອກຕັ້ງ ແລະການຢັ້ງຢືນຄຸນລັກສະນະຂອງສະມາຊິກສະພາແຫ່ງຊາດ ຊຸດທີ VII, ສະເໜີໂດຍທ່ານ ດຣ. ບຸນທອງ ຈິດມະນີ ກຳມະການກົມການເມືອງສູນກາງພັກ, ກຳມະການຄະນະກຳມະການເລືອກຕັ້ງລະດັບຊາດ, ຫົວໜ້າອະນຸກຳມະການໂຄງປະກອບ ແລະບຸກຄະລາກອນຂອງຄະນະກຳມະການເລືອກຕັ້ງ ລະດັບຊາດ. ກອງປະຊຸມໄດ້ຢັ້ງຢືນວ່າສະມາຊິກສະພາແຫ່ງຊາດ ຊຸດທີ VII ມີຄຸນລັກສະນະມາດຖານຄົບຖ້ວນ ແລະຖືກຕ້ອງຕາມລະບຽບກົດໝາຍ, ສົມກຽດເປັນຕົວແທນແຫ່ງສິດອຳນາດຂອງປະຊາຊົນລາວບັນ ດາເຜົ່າໃນທົ່ວປະເທດ. ກອງປະຊຸມໄດ້ສະແດງຄວາມຍ້ອງຍໍຊົມເຊີຍປະ



1

ຊາຊົນບັນດາເຜົ່າ ທີ່ໄດ້ຕື່ນຕົວສະ ໝັກໃຈໄປໃຊ້ສິດເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ VII, ຍ້ອງຍໍ່ຊົມເຊີຍກຳລັງປະກອບອາວຸດ, ອົງການຈັດຕັ້ງພັກ, ອຳນາດການປົກຄອງ, ອົງການແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະຄະນະກຳມະການເລືອກຕັ້ງຂັ້ນຕ່າງໆ ທີ່ໄດ້ປະກອບສ່ວນຈັດຕັ້ງດຳເນີນການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ VII ດ້ວຍຜົນສຳເລັດອັນຈົບງາມ.

II. ຮັບຮອງເອົາໂຄງປະກອບກົງຈັກການຈັດຕັ້ງ ແລະບຸກຄະລາກອນຂອງສະພາແຫ່ງຊາດ ຊຸດທີ VII ໃນນີ້:

1. ເລືອກຕັ້ງເອົາ ທ່ານ ນາງ ປານີ ຢາທໍ່ຕູ້ ກຳມະການກົມການເມືອງສູນກາງພັກ ເປັນປະທານສະພາແຫ່ງຊາດ ຊຸດທີ VII, ເລືອກຕັ້ງເອົາ ທ່ານ ດຣ. ໄຊສົມພອນ ພົມວິຫານ ກຳມະການສູນກາງພັກ ແລະທ່ານ ສົມພັນ ແພງຄຳມີ ກຳມະການສູນກາງພັກ ເປັນຮອງປະທານສະພາແຫ່ງຊາດຊຸດທີ VII ແລະເລືອກຕັ້ງເອົາຄະນະປະຈຳສະພາແຫ່ງຊາດ ຊຸດທີ VII ຈຳນວນ 10 ທ່ານຄື:

| | |
|---|---|
| 1/. ທ່ານ ນາງ ປານີ ຢາທໍ່ຕູ້ | ເປັນປະທານຄະນະປະຈຳສະພາແຫ່ງຊາດ |
| 2/. ທ່ານ ດຣ. ໄຊສົມພອນ ພົມວິຫານ | ເປັນຮອງປະທານຄະນະປະຈຳສະພາແຫ່ງຊາດ |
| 3/. ທ່ານ ສົມພັນ ແພງຄຳມີ | ເປັນຮອງປະທານຄະນະປະຈຳສະພາແຫ່ງຊາດ |
| 4/. ທ່ານ ດວງດີ ອຸດທະຈັກ | ເປັນກຳມະການຄະນະປະຈຳສະພາແຫ່ງຊາດ |
| 5/. ທ່ານ ສຈ. ດາວອນ ຫວ່າງວິຈິດ | ເປັນກຳມະການຄະນະປະຈຳສະພາແຫ່ງຊາດ |
| 6/. ທ່ານ ດຣ. ກຸແກ້ວ ອັກຄະມົນຕີ | ເປັນກຳມະການຄະນະປະຈຳສະພາແຫ່ງຊາດ |
| 7/. ທ່ານ ດຣ. ນາງ ສຸວັນເພັງ ບຸບຜານຸວົງ | ເປັນກຳມະການຄະນະປະຈຳສະພາແຫ່ງຊາດ |
| 8/. ທ່ານ ສຈ. ດຣ. ພອນເທບ ພົນເສນາ | ເປັນກຳມະການຄະນະປະຈຳສະພາແຫ່ງຊາດ |
| 9/. ທ່ານ ພົນຈັດຕະວາ ວິໄລ ດວງມະນີ | ເປັນກຳມະການຄະນະປະຈຳສະພາແຫ່ງຊາດ |
| 10/. ທ່ານ ດຣ. ອຸ່ນແກ້ວ ວຸທິລາດ | ເປັນກຳມະການຄະນະປະຈຳສະພາແຫ່ງຊາດ |

2. ຢັ້ງຢືນ ແລະຮັບຮອງເອົາບັນດາກຳມາທິການຂອງສະພາແຫ່ງຊາດ ຊຸດທີ VII ຊຶ່ງປະກອບດ້ວຍ 6 ກຳມາທິການຄື:

1/. ກຳມາທິການ ກົດໝາຍ

2/. ກຳມາທິການ ເສດຖະກິດ ແຜນການ ແລະການເງິນ

3/. ກຳມາທິການ ວັດທະນະທຳ - ສັງຄົມ

4/. ກຳມາທິການ ບັນດາເຜົ່າ

5/. ກຳມາທິການ ປ້ອງກັນຊາດ - ປ້ອງກັນຄວາມສະຫງົບ

6/. ກຳມາທິການ ການຕ່າງປະເທດ

3. ຮັບຮອງເອົາການແຕ່ງຕັ້ງບັນດາປະທານ, ຮອງປະທານກຳມາທິການ ແລະຫົວໜ້າຫ້ອງວ່າການສະພາແຫ່ງຊາດ ຄື:

1/. ກຳມາທິການ ກົດໝາຍ:

- ທ່ານ ສຈ. ດາວອນ ຫວ່າງວິຈິດ ເປັນປະທານ
- ທ່ານ ກິສິນ ສິນພັນງາມ ເປັນຮອງປະທານ
- ທ່ານ ນາງ ບຸນຊຳ ເຫຼົ່າພະສິຣິ ເປັນຮອງປະທານ

2/. ກຳມາທິການ ເສດຖະກິດ ແຜນການ ແລະການເງິນ:

- ທ່ານ ດຣ. ນາງ ສຸວັນເພັງ ບຸບຜານຸວົງ ເປັນປະທານ
- ທ່ານ ບຸນປອນ ສີສຸລາດ ເປັນຮອງປະທານ
- ທ່ານ ດຣ. ນາງ ບົວຄຳ ທິບພະວົງ ເປັນຮອງປະທານ

3/. ກຳມາທິການ ວັດທະນະທຳ - ສັງຄົມ:

- ທ່ານ ສຈ. ດຣ. ພອນເທບ ພົນເສນາ ເປັນປະທານ
- ທ່ານ ດຣ. ສົມພູ ດວງສະຫວັນ ເປັນຮອງປະທານ
- ທ່ານ ນາງ ບົວພັນ ລີໄກຢາ ເປັນຮອງປະທານ

4/. ກຳມາທິການ ບັນດາເຜົ່າ:

- ທ່ານ ດວງດີ ອຸດທະຈັກ ເປັນປະທານ
- ທ່ານ ຄຳຊາວ ໄກຊົງ ເປັນຮອງປະທານ

5/. ກຳມາທິການ ປ້ອງກັນຊາດ - ປ້ອງກັນຄວາມສະຫງົບ:

- ທ່ານ ພົນຈັດຕະວາ ວິໄລ ດວງມະນີ ເປັນປະທານ
- ທ່ານ ພັນເອກ ຄຳສຸກ ວິອົນທະວົງ ເປັນຮອງປະທານ

6/. ກຳມາທິການ ການຕ່າງປະເທດ:

- ທ່ານ ດຣ. ກຸແກ້ວ ອັກຄະມົນຕີ ເປັນປະທານ
- ທ່ານ ສຈ. ດຣ. ນາງ ບຸນຍົງ ບຸບຜາ ເປັນຮອງປະທານ

7/. ຫ້ອງວ່າການສະພາແຫ່ງຊາດ:

- ທ່ານ ດຣ. ອຸ່ນແກ້ວ ວຸທິລາດ ເປັນຫົວໜ້າຫ້ອງວ່າການສະພາແຫ່ງຊາດ

**4.** ຮັບຮອງເອົາການສ້າງຕັ້ງລັດຖະສະພາສາກົນ ຂອງສະພາແຫ່ງຊາດ ຊຶ່ງປະກອບດ້ວຍສະມາຊິກສະພາແຫ່ງຊາດທັງໝົດ 132 ທ່ານ ແລະເລືອກຕັ້ງເອົາປະທານ, ຮອງປະທານ ແລະເລຂາທິການລັດຖະສະພາສາກົນຄື:

1/. ທ່ານ ນາງ ປານີ ຢາທໍ່ຕູ້ ເປັນປະທານ
2/. ທ່ານ ດຣ. ໄຊສົມພອນ ພົມວິຫານ ເປັນຮອງປະທານ
3/. ທ່ານ ສົມພັນ ແພງຄຳມີ ເປັນຮອງປະທານ
4/. ທ່ານ ດຣ. ກຸແກ້ວ ອັກຄະມົນຕີ ເປັນເລຂາທິການ

III. ເລືອກຕັ້ງເອົາປະທານປະເທດ ແລະຮອງປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຄື:

1/. ທ່ານ ຈູມມາລີ ໄຊຍະສອນ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ ເປັນປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ;

2/. ທ່ານ ບຸນຍັງ ວໍລະຈິດ ກຳມະການກົມການເມືອງສູນກາງພັກ ເປັນຮອງປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ;

IV. ຮັບຮອງເອົາການແຕ່ງຕັ້ງ ທ່ານ ທອງສິງ ທຳມະວົງ ກຳມະການກົມການເມືອງສູນກາງພັກ ເປັນນາຍົກລັດຖະມົນຕີ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ພ້ອມທັງຮັບຮອງເອົາໂຄງປະກອບກົງຈັກການຈັດຕັ້ງ ແລະລາຍຊື່ຄະນະລັດຖະບານດັ່ງນີ້:

1. ໂຄງປະກອບກົງຈັກຂອງລັດຖະບານ ມີ 18 ກະຊວງ, 3 ອົງການທຽບເທົ່າຄື:

1/. ຫ້ອງວ່າການລັດຖະບານ

2/. ກະຊວງ ປ້ອງກັນປະເທດ

3/. ກະຊວງ ປ້ອງກັນຄວາມສະຫງົບ

4/. ກະຊວງ ການຕ່າງປະເທດ

5/. ກະຊວງ ຍຸຕິທຳ

√6/. ກະຊວງ ພາຍໃນ

7/. ອົງການ ກວດກາລັດຖະບານ

8/. ກະຊວງ ສຶກສາທິການ ແລະກິລາ

9/. ກະຊວງ ສາທາລະນະສຸກ

10/. ກະຊວງ ຖະແຫຼງຂ່າວ-ວັດທະນະທຳ ແລະທ່ອງທ່ຽວ

11/. ກະຊວງ ແຮງງານ ແລະສະຫວັດດີການສັງຄົມ

12/. ກະຊວງ ແຜນການ ແລະການລົງທຶນ

13/. ກະຊວງ ການເງິນ

14/. ກະຊວງ ກະສິກຳ ແລະປ່າໄມ້

√15/. ກະຊວງ ຊັບພະຍາກອນທຳມະຊາດ ແລະສິ່ງແວດລ້ອມ

16/. ກະຊວງ ພະລັງງານ ແລະບໍ່ແຮ່

17/. ກະຊວງ ອຸດສາຫະກຳ ແລະການຄ້າ

18/. ກະຊວງ ໂຍທາທິການ ແລະຂົນສົ່ງ

√19/. ກະຊວງ ວິທະຍາສາດ ແລະເຕັກໂນໂລຊີ

√20/. ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະການສື່ສານ

21/. ທະນາຄານ ແຫ່ງ ສປປ ລາວ

2. ຄະນະລັດຖະບານ ປະກອບມີບັນດາທ່ານດັ່ງນີ້:

| | |
|---|---|
| 1/. ທ່ານ ອາຊາງ ລາວລີ | ກຳມະການກົມການເມືອງສູນກາງພັກ, ຮອງນາຍົກລັດຖະມົນຕີ |
| 2/. ທ່ານ ດຣ. ທອງລຸນ ສີສຸລິດ | ກຳມະການກົມການເມືອງສູນກາງພັກ, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີວ່າການກະຊວງການຕ່າງປະເທດ |
| 3/. ທ່ານ ພົນໂທ ດວງໃຈ ພິຈິດ | ກຳມະການກົມການເມືອງສູນກາງພັກ, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີວ່າການກະຊວງປ້ອງກັນປະເທດ |
| 4/. ທ່ານ ສົມສະຫວາດ ເລັ່ງສະຫວັດ | ກຳມະການກົມການເມືອງສູນກາງພັກ, ຮອງນາຍົກລັດຖະມົນຕີ |
| 5/. ທ່ານ ດຣ. ບຸນທອງ ຈິດມະນີ | ກຳມະການກົມການເມືອງສູນກາງພັກ, ປະທານອົງການກວດກາລັດຖະບານ, ຫົວໜ້າອົງການຕ້ານການສໍ້ລາດບັງຫຼວງ |
| 6/. ທ່ານ ດຣ. ພັນຄຳ ວິພາວັນ | ກຳມະການກົມການເມືອງສູນກາງພັກ, ລັດຖະມົນຕີວ່າການກະຊວງສຶກສາທິການ ແລະກິລາ |
| 7/. ທ່ານ ດຣ. ທອງບັນ ແສງອາພອນ | ຄະນະເລຂາທິການສູນກາງພັກ, ລັດຖະມົນຕີວ່າການກະຊວງ ປ້ອງກັນຄວາມສະຫງົບ |
| 8/. ທ່ານ ນາງ ອ່ອນຈັນ ທຳມະວົງ | ກຳມະການສູນກາງພັກ, ລັດຖະມົນຕີວ່າການກະຊວງແຮງງານ ແລະສະ ຫວັດດີການສັງຄົມ |
| 9/. ທ່ານ ດຣ. ຈະເລີນ ເຢຍປາວເຮີ | ກຳມະການສູນກາງພັກ, ລັດຖະມົນຕີວ່າການກະຊວງຍຸຕິທຳ |
| 10/. ທ່ານ ສຸລີວົງ ດາລາວົງ | ກຳມະການສູນກາງພັກ, ລັດຖະມົນຕີວ່າການກະຊວງພະລັງງານ ແລະບໍ່ແຮ່ |
| 11/. ທ່ານ ນາງ ບຸນເພັງ ມູນໂພໄຊ | ກຳມະການສູນກາງພັກ, ລັດຖະມົນຕີປະຈຳຫ້ອງວ່າການລັດຖະບານ |
| 12/. ທ່ານ ວິໄລວັນ ພົມເຂ | ກຳມະການສູນກາງພັກ, ລັດຖະມົນຕີວ່າການກະຊວງກະສິກຳ ແລະປ່າໄມ້ |
| 13/. ທ່ານ ດຣ. ສົມລະວົງ ຄຸດໄພທູນ | ກຳມະການສູນກາງພັກ, ລັດຖະມົນຕີ, ຫົວໜ້າຫ້ອງວ່າການລັດຖະບານ |
| 14/. ທ່ານ ດຣ. ນາມ ວິຍະເກດ | ກຳມະການສູນກາງພັກ, ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະການຄ້າ |

15/. ທ່ານ ສົມມາດ ພົນເສນາ — ກຳມະການສູນກາງພັກ, ລັດຖະມົນຕີວ່າການກະຊວງໂຍທາທິການ ແລະຂົນສົ່ງ

16/. ທ່ານ ສົມດີ ດວງດີ — ກຳມະການສູນກາງພັກ, ລັດຖະມົນຕີວ່າການກະຊວງແຜນການ ແລະການລົງທຶນ

17/. ທ່ານ ພູເພັດ ຄຳພູນວົງ — ກຳມະການສູນກາງພັກ, ລັດຖະມົນຕີວ່າການກະຊວງການເງິນ

18/. ທ່ານ ສຈ. ດຣ. ບໍ່ແສງຄຳ ວົງດາລາ — ກຳມະການສູນກາງພັກ, ລັດຖະມົນຕີວ່າການກະຊວງຖະແຫຼງຂ່າວ-ວັດທະນະທຳ ແລະທ່ອງທ່ຽວ

19/. ທ່ານ ສຈ. ດຣ. ເອກສະຫວ່າງ ວົງວິຈິດ — ກຳມະການສູນກາງພັກ, ລັດຖະມົນຕີວ່າການກະຊວງສາທາລະນະສຸກ

20/. ທ່ານ ບຸນເຮືອງ ດວງພະຈັນ — ລັດຖະມົນຕີປະຈຳຫ້ອງວ່າການລັດຖະບານ

21/. ທ່ານ ຄຳປານ ພິລາວົງ — ລັດຖະມົນຕີວ່າການກະ ຊວງພາຍໃນ

22/. ທ່ານ ສຈ. ດຣ. ບຸນຍຽມ ພົດສະໄໝ — ລັດຖະມົນຕີປະຈຳຫ້ອງວ່າການລັດຖະບານ

23/. ທ່ານ ດຣ. ດວງສະຫວັດ ສຸພານຸວົງ — ລັດຖະມົນຕີປະຈຳຫ້ອງວ່າການລັດຖະບານ

24/. ທ່ານ ນາງ ເຂັມແພງ ພົນເສນາ — ລັດຖະມົນຕີປະຈຳຫ້ອງວ່າການລັດຖະບານ

25/. ທ່ານ ສຈ. ດຣ. ບໍ່ວຽງຄຳ ວົງດາລາ — ລັດຖະມົນຕີວ່າການກະຊວງ ວິທະຍາສາດ ແລະເຕັກໂນໂລຊີ

26/. ທ່ານ ນູລິນ ສິນບັນດິດ — ລັດຖະມົນຕີວ່າການກະຊວງຊັບພະຍາກອນທຳມະຊາດ ແລະສິ່ງແວດລ້ອມ

27/. ທ່ານ ຫຽມ ພົມມະຈັນ — ລັດຖະມົນຕີວ່າການກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະການສື່ສານ

28/. ທ່ານ ສົມພາວ ໄຟສິດ — ຜູ້ວ່າການທະນາຄານ ແຫ່ງ ສປປ ລາວ

ເພື່ອຮັບປະກັນໃຫ້ການບໍລິຫານປະເທດຂອງລັດຖະບານມີຄວາມຕໍ່ເນື່ອງ, ສະພາແຫ່ງຊາດສະເໜີໃຫ້ລັດຖະບານຮີບຮ້ອນປັບປຸງຊັບຊ້ອນວຽກງານໃນບັນດາກະຊວງ, ອົງການທີ່ຂຶ້ນກັບຕົນໂດຍໄວ ແລະຈັດຕັ້ງປະຕິບັດວຽກງານຕ່າງໆຢ່າງມີປະສິດທິຜົນ.

V. ເລືອກຕັ້ງເອົາ ທ່ານ ຄຳພັນ ສິດທິດຳພາ ກຳມະການສູນກາງພັກ ເປັນປະທານສານປະຊາຊົນສູງສຸດ ແລະ ທ່ານ ຄຳສານ ສຸວົງ ກຳມະການສູນກາງພັກ ເປັນຫົວໜ້າອົງການໄອຍະການປະຊາຊົນສູງສຸດ.

VI. ແຜນພັດທະນາເສດຖະກິດ-ສັງຄົມ ແລະແຜນງົບປະມານແຫ່ງລັດ

1. ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີຄັ້ງທີ VII:

ກອງປະຊຸມຕີລາຄາສູງ ຕໍ່ຄວາມພະຍາຍາມຂອງລັດຖະບານ ທີ່ມີຜົນງານໃຫຍ່ຫລວງ ໃນການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີຄັ້ງທີ VI (2006- 2010) ເຮັດໃຫ້ເສດຖະກິດຂະຫຍາຍຕົວຢ່າງຕໍ່ເນື່ອງໃນລະດັບສູງ, ສາມາດຄຸ້ມຄອງການດຸນດ່ຽງ ດ້ານເສດຖະກິດມະຫາພາກ ແລະ

ມີຜົນສຳເລັດຫລາຍປະການໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ, ບັນດາໂຄງການພັດທະນາທີ່ ສຳຄັນຫລາຍໂຄງການໄດ້ສຳເລັດ ແລະນຳໃຊ້ຢ່າງມີປະສິດທິຜົນ, ພື້ນຖານໂຄງລ່າງໄດ້ຮັບການພັດທະນາ ເປັນກ້າວໆມາ, ປະຊາຊົນສ່ວນຫລາຍມີການເປັນຢູ່ດີຂຶ້ນຢ່າງຈະແຈ້ງ, ປະເທດຊາດມີຄວາມສະຫງົບສັງຄົມ ມີຄວາມເປັນລະບຽບຮຽບຮ້ອຍ ເຊິ່ງເປັນພື້ນຖານອັນສຳຄັນຍິ່ງໃຫ້ແກ່ການຈັດຕັ້ງປະຕິບັດແຜນພັດທະນາ ເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VII.

ກອງປະຊຸມຮັບຮອງເອົາໜ້າທີ່ພື້ນຖານ, ຄາດໝາຍສູ້ຊົນຕົ້ນຕໍ ດ້ານເສດຖະກິດມະຫາພາກ, ຂະ ແໜງເສດຖະກິດ, ຂະແໜງສັງຄົມ, ສິ່ງແວດລ້ອມ ແລະ ຊັບພະຍາກອນທຳມະຊາດ, ການເຊື່ອມໂຍງສາ ກົນ ; ການດຸນດ່ຽງມະຫາພາກ ແລະ ທິດທາງໜ້າທີ່ການພັດທະນາຂະແໜງການ ແລະ ຂົງເຂດ ພ້ອມດ້ວຍ ບັນດາມາດຕະການຈັດຕັ້ງປະຕິບັດຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີຄັ້ງທີ VII. ເພື່ອ ຮັບປະກັນການຈັດຕັ້ງປະຕິບັດໃຫ້ບັນລຸຄາດໝາຍທີ່ວາງໄວ້, ສະພາແຫ່ງຊາດ ສະເໜີໃຫ້ລັດຖະບານເອົາໃຈ ໃສ່ບັນຫາທີ່ສຳຄັນຕົ້ນດັ່ງນີ້:

1/. ຄຸນນະພາບການເຕີບໂຕຂອງເສດຖະກິດ ແມ່ນການພັດທະນາທີ່ມີຄວາມສົມດູນ ລະຫວ່າງການ ພັດທະນາເສດຖະກິດ, ວັດທະນະທຳ-ສັງຄົມ ແລະການປົກປັກຮັກສາສິ່ງແວດລ້ອມ ເພື່ອການພັດທະນາ ແບບຍືນຍົງ. ການພັດທະນາເສດຖະກິດຕ້ອງໄປຕາມທິດການຫັນຈາກເສດຖະກິດທຳມະຊາດ ໄປສູ່ເສດຖະ ກິດຜະລິດເປັນສິນຄ້າ ແລະເສດຖະກິດພູມປັນຍາ, ສ້າງພື້ນຖານເສດຖະກິດທີ່ມີຄວາມສາມາດແຂ່ງຂັນສູງ, ກຽມພ້ອມຮັບມືກັບວິກິດການທາງດ້ານເສດຖະກິດພາຍນອກ, ໄພທຳມະຊາດ ແລະໂລກລະບາດທີ່ຈະເກີດ ຂຶ້ນ; ຫັນປ່ຽນໂຄງປະກອບເສດຖະກິດທີ່ເອື່ອຍອີງໃສ່ແຕ່ຊັບພະຍາກອນທຳມະຊາດໄປສູ່ເສດຖະກິດພູມປັນ ຍາ; ເອົາໃຈໃສ່ພັດທະນາທຸລະກິດຂະໜາດນ້ອຍ ແລະຂະໜາດກາງ ໂດຍເນັ້ນການສ້າງມູນຄ່າເພີ່ມຈາກ ຂະແໜງການທີ່ບໍ່ນຳໃຊ້ຊັບພະຍາກອນທຳມະຊາດໃຫ້ຫລາຍຂຶ້ນ. ການພັດທະນາຂົງເຂດວັດທະນະທຳ-ສັງ ຄົມ ຕ້ອງສູ້ຊົນປະຕິບັດໃຫ້ບັນລຸບັນດາເປົ້າໝາຍສະຫັດສະຫວັດ ເພື່ອການພັດທະນາ (MDGs).

2/. ສູ້ຊົນຈັດຕັ້ງປະຕິບັດບັນດານະໂຍບາຍ ເພື່ອຮັບປະກັນຄວາມສະເໝີພາບໃຫ້ແກ່ພົນລະເມືອງ ລາວທຸກຄົນ ໃນການເຂົ້າເຖິງການໄດ້ຮັບຜົນປະໂຫຍດໂດຍກົງຈາກການພັດທະນາເຊັ່ນ: ນະໂຍບາຍພັດ ທະນາຊົນນະບົດ ແລະແກ້ໄຂຄວາມທຸກຍາກ; ນະໂຍບາຍສົ່ງເສີມການລົງທຶນເຂົ້າສູ່ເຂດທຸກຍາກເຂດຫ່າງ ໄກສອກຫລີກ; ນະໂຍບາຍດັດສົມລາຍຮັບ ແລະນະໂຍບາຍຊ່ວຍໜູນອື່ນໆທາງດ້ານສັງຄົມຂອງລັດ.

3/. ຮັບປະກັນການຄຸ້ມຄອງ, ການນຳໃຊ້ ຊັບພະຍາກອນທຳມະຊາດ ເພື່ອການພັດທະນາໃຫ້ມີ ປະສິດທິຜົນສູງສຸດ ແລະ ຍືນຍົງ.

4/. ເອົາໃຈໃສ່ວຽກງານຄົ້ນຄວ້າວິທະຍາສາດ ແລະການຖ່າຍທອດເຕັກໂນໂລຊີ ທີ່ເໝາະສົມ. ເພີ່ມການລົງທຶນຂອງລັດເຂົ້າໃສ່ຂົງເຂດນີ້ ໃຫ້ມີອັດຕາສ່ວນເພີ່ມຂຶ້ນໃນແຕ່ລະປີ.

5/. ຄຸ້ມຄອງ ແລະຈັດຕັ້ງປະຕິບັດໂຄງການລົງທຶນຂະໜາດໃຫຍ່ລະດັບຊາດ ແລະໂຄງການ ບູລິມະ ສິດຂອງລັດຖະບານໃຫ້ເຂັ້ມງວດ, ເດັດຂາດແກ້ໄຂການສ້າງໂຄງການນອກແຜນທີ່ສະພາແຫ່ງຊາດອະນຸ ມັດ.

6/. ເອົາໃຈໃສ່ພັດທະນາຊັບພະຍາກອນມະນຸດ ແລະ ສ້າງສີມື ແຮງງານ ຂອງຄົນລາວ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງການຫັນເປັນອຸດສາຫະກຳ ແລະທັນສະໄໝ. ຊຸກຍູ້ສົ່ງເສີມທຸກພາກສ່ວນຂອງສັງຄົມປະກອບສ່ວນເຂົ້າໃນວຽກງານດັ່ງກ່າວ ເປັນຕົ້ນບັນດາໂຄງການລົງທຶນຂອງພາຍໃນ ແລະຕ່າງປະເທດ ຕ້ອງມີໜ້າທີ່ປະກອບສ່ວນໃນການພັດທະນາສີມືແຮງງານຂອງຄົນລາວ, ຖ່າຍທອດກຳມະວິທີການຜະລິດ, ການຄຸ້ມຄອງແບບໃໝ່ ແລະການຖ່າຍທອດເຕັກໂນໂລຊີ ໃຫ້ແກ່ຄົນລາວ.

7/. ທຸກນະໂຍບາຍ, ກົນໄກບໍລິຫານລັດຂັ້ນຕ່າງໆ ທີ່ວາງອອກມາຕ້ອງຮັບໃຊ້ສິດ ແລະຜົນປະໂຫຍດຂອງລັດ, ຂອງປະຊາຊົນ ແລະມີຄວາມສະດວກວ່ອງໄວ ; ເອົາໃຈໃສ່ແກ້ໄຂພະຍາດອາຍາສິດ ຫ່າງເຫີນມະຫາຊົນ ແລະແກ້ໄຂປະກົດການຫຍໍ້ທໍ້ຢູ່ແຕ່ລະຂັ້ນຢ່າງຈິງຈັງ, ຖືກຕ້ອງຕາມລັດຖະທຳມະນູນ ແລະກົດໝາຍ ກໍຄືນິຕິກຳຕ່າງໆທີ່ລັດວາງອອກ.

8/. ເພີ່ມທະວີພັດທະນາລະບົບກົດໝາຍໃຫ້ຄົບຊຸດ ມີຄຸນນະພາບ ແລະເຮັດໃຫ້ກົດໝາຍມີຄວາມສັກສິດໃນການຈັດຕັ້ງປະຕິບັດ ; ເອົາໃຈໃສ່ການໂຄສະນາເຜີຍແຜ່, ສຶກສາອົບຮົມກົດໝາຍໃຫ້ກວ້າງຂວາງມີຈຸດສຸມ ; ເພື່ອສ້າງສະຕິເຄົາລົບ ແລະປະຕິບັດກົດໝາຍໃຫ້ທົ່ວສັງຄົມ. ຈຳກັດ ແກ້ໄຂປະກົດການລະເມີດລະບຽບກົດໝາຍ, ເຮັດໃຫ້ສັງຄົມມີຄວາມສະຫງົບ, ຍຸຕິທຳນັບມື້ນັບຫລາຍຂຶ້ນ, ສ້າງລັດແຫ່ງກົດໝາຍໃຫ້ນັບມື້ເຂັ້ມແຂງ ແລະກາຍເປັນລັດຂອງປະຊາຊົນ, ໂດຍປະຊາຊົນ ແລະເພື່ອຜົນປະໂຫຍດຂອງປະຊາຊົນຢ່າງແທ້ຈິງ.

## 2. ແຜນພັດທະນາເສດຖະກິດ-ສັງຄົມ ສົກປີ 2011-2012 :

ກອງປະຊຸມເຫັນດີຮັບຮອງເອົາບັນດາທິດທາງໜ້າທີ່ລວມ ແລະຄາດໝາຍສູ້ຊົນ, ການດຸ່ນດ່ຽງມະຫາພາກ ແລະໜ້າທີ່ຈຸດສຸມລະອຽດຂອງການພັດທະນາແຕ່ລະຂະແໜງການ ແລະທ້ອງຖິ່ນພ້ອມດ້ວຍມາດຕະການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ສົກປີ 2011-2012. ນອກຈາກບັນດາມາດຕະການທີ່ລັດຖະບານໄດ້ກຳນົດອອກແລ້ວ, ສະພາແຫ່ງຊາດ ສະເໜີເພີ່ມບາງມາດຕະການຄື:

1/. ການພັດທະນາຊົນນະບົດ ແກ້ໄຂຄວາມທຸກຍາກຂອງປະຊາຊົນ ໃຫ້ມີບາດກ້າວຫັນປ່ຽນທີ່ເດັ່ນຊັດ. ການນຳໃຊ້ຊັບພະຍາກອນທຳມະຊາດ ເປັນຕົ້ນແມ່ນຊັບພະຍາກອນປ່າໄມ້ ແລະ ທີ່ດິນ ຕ້ອງສົມຄູ່ລະຫວ່າງການນຳໃຊ້ຊັບພະຍາກອນທຳມະຊາດ ເພື່ອການເຕີບໂຕທາງດ້ານເສດຖະກິດ ກັບການປະກອບສ່ວນທາງດ້ານລາຍຮັບແຫ່ງຊາດ.

2/. ສົ່ງເສີມການຄ້າ ແລະການລົງທຶນ ດ້ວຍການຈັດຕັ້ງການບໍລິການລົງທຶນໂດຍຜ່ານປະຕູດຽວໃຫ້ເປັນຮູບປະທຳ ແລະຂະຫຍາຍກວ້າງອອກ. ສ້າງຄວາມສາມາດແຂ່ງຂັນສູງຂຶ້ນໃຫ້ແກ່ພື້ນຖານການຜະລິດ ແລະ ການບໍລິການ ເພື່ອຮອງຮັບການເປີດເສລີດ້ານການຄ້າ-ການລົງທຶນໃນພາກພື້ນ ແນໃສ່ນຳເອົາຜົນປະໂຫຍດຕົວຈິງມາສູ່ການພັດທະນາຂອງປະເທດເຮົາໃຫ້ນັບມື້ນັບຫລາຍຂຶ້ນ.

3/. ຮັບປະກັນໃຫ້ມີຖານລາຍຮັບທີ່ໝັ້ນທ່ຽງ, ມີຄວາມສົມດູນລະຫວ່າງການຊົມໃຊ້ ແລະການສະສົມ ແນໃສ່ລະດົມທຶນຮອນຢ່າງພຽງພໍ ເພື່ອພັດທະນາເສດຖະກິດ ແລະປັບປຸງຄຸນນະພາບຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ. ເພີ່ມລາຍຮັບສົ່ງອອກສິນຄ້າ ແລະບໍລິການ ເພື່ອເພີ່ມຄັງແຮສຳຮອງເງິນຕາຕ່າງປະເທດ ໄປພ້ອມກັບການຫລຸດຜ່ອນໜີ້ສິນໃນລະບົບຢ່າງມີແຜນການ.

4/. ເພີ່ມທະວີສະຕິເຄົາລົບກົດໝາຍ, ການຕິດຕາມກວດກາ, ການກວດສອບການເງິນ; ຕ້ານການສໍ້ລາດບັງຫລວງ, ການສວຍໃຊ້ຖານະຕຳແໜ່ງ ແລະປະຕິບັດວິໄນຢ່າງເຂັ້ມງວດຕໍ່ຜູ້ກະທຳຜິດກົດໝາຍ. ສົ່ງເສີມດ້ານຕັ້ງໜ້າ, ແນໃສ່ເພີ່ມຄວາມສັກສິດແຫ່ງການຄຸ້ມຄອງລັດ, ຄຸ້ມຄອງສັງຄົມດ້ວຍລະບຽບກົດໝາຍໃຫ້ເຂັ້ມງວດຂຶ້ນ.

5/. ເອົາໃຈໃສ່ສ້າງ ແລະປະຕິບັດກົນໄກຕ້ານປະກົດການຫຍໍ້ທໍ້ ໃນສັງຄົມຢ່າງແຂງແຮງ ເປັນຕົ້ນການສໍ້ລາດບັງຫຼວງ, ຢາເສບຕິດ, ສິ່ງມຶນເມົາ, ການລະເມີດລະບຽບກົດໝາຍ ແລະອື່ນໆ ດ້ວຍການເຂົ້າຮ່ວມຂອງພາກສ່ວນສິ້ນວນຊົນ ແລະມວນຊົນທຸກຊັ້ນຄົນ.

3. ແຜນງົບປະມານແຫ່ງລັດ

ກ. ການຈັດຕັ້ງປະຕິບັດແຜນງົບປະມານສົກປີ 2010-2011:

ກອງປະຊຸມຕີລາຄາສູງ ແລະ ສະແດງຄວາມຊົມເຊີຍ ຕໍ່ຄວາມພະຍາຍາມ ແລະ ບຸກບືນຂອງລັດຖະບານ ກໍຄືຂະແໜງການເງິນ ທີ່ໄດ້ພະຍາຍາມປະຕິບັດ ການເກັບລາຍຮັບ ແລະ ຄຸ້ມຄອງລາຍຈ່າຍ ໄດ້ສຳເລັດຕາມລະດັບຄາດໝາຍ ທີ່ສະພາແຫ່ງຊາດໄດ້ຮັບຮອງເອົາ.

ກອງປະຊຸມຮັບຮອງເອົາການສະເໜີດັດແກ້ແຜນງົບປະມານແຫ່ງລັດ 6 ເດືອນທ້າຍສົກປີ 2010-2011 ດັ່ງນີ້ :

1/. ດັດແກ້ລາຍຮັບທັງໝົດ ຈຳນວນ 133,51 ຕື້ກີບເປັນລາຍຮັບ ຂອງສົກປີ 2010-2011 (ເອກະສານຊ້ອນທ້າຍ 1).

2/. ດັດແກ້ 13 ຮ່ວງລາຍຈ່າຍລວມເປັນເງິນທັງໝົດ 470,04 ຕື້ກີບ ໃຫ້ເປັນຮ່ວງ ລາຍຈ່າຍຂອງສົກປີ 2010-2011 (ເອກະສານຊ້ອນທ້າຍ 2).

3/. ໃຫ້ມີວິທີການຈັດຕັ້ງປະຕິບັດ ຕໍ່ 2 ຮ່ວງລາຍຈ່າຍຄື:

ຮ່ວງທີ່ 1: ລາຍຈ່າຍວິຊາການ ຈຳນວນ 105,48 ຕື້ກີບ ທີ່ບໍ່ສາມາດເອົາເຂົ້າແຜນງົບປະມານສົກປີ 2010-2011 ນັ້ນ ມອບໃຫ້ອົງການກວດສອບແຫ່ງລັດ ດຳເນີນການກວດສອບຕົວຈິງ ແລ້ວລາຍງານໃຫ້ຄະນະປະຈຳສະພາແຫ່ງຊາດ ເພື່ອພິຈາລະນາຕົກລົງມາດຕະການ ແລະ ວິທີການແກ້ໄຂ.

ຮ່ວງທີ່ 2: ເງິນບຳເນັດເກີນແຜນ 2009-2010 ຈຳນວນ 245,472 ຕື້ກີບ, ໃນນີ້: ພູດຂອງສູນກາງຈຳນວນ 45,658 ຕື້ກີບໃຫ້ມອບເຂົ້າຄັງສະສົມແຫ່ງລັດ. ສ່ວນການໃຊ້ຈ່າຍແມ່ນໃຫ້ປະຕິບັດຕາມລະບຽບກົດໝາຍທີ່ໄດ້ກຳນົດໄວ້. ສ່ວນພູດຂອງທ້ອງຖິ່ນຈຳນວນ 199,814 ຕື້ກີບ ເຫັນດີເປັນລາຍຈ່າຍຂອງທ້ອງຖິ່ນ. ມອບໃຫ້ລັດຖະບານຄຸ້ມຄອງລາຍຈ່າຍດັ່ງກ່າວນີ້ ໄປຕາມເປົ້າໝາຍບູລິມະສິດເປັນຕົ້ນ ຊຳລະໜີ້ສິນ, ໂຄງການພັດທະນາຊົນນະບົດ ແລະແກ້ໄຂຄວາມທຸກຍາກຂອງປະຊາຊົນ ພ້ອມທັງລາຍງານການໃຊ້ຈ່າຍດັ່ງກ່າວນີ້ ໃຫ້ຄະນະປະຈຳສະພາແຫ່ງຊາດ ເປັນລາຍລັກອັກສອນ.

ຂ. ແຜນງົບປະມານແຫ່ງລັດສົກປີ 2011-2012:

1/. ຮັບຮອງເອົາຕົວເລກລາຍຮັບງົບປະມານທັງໝົດຈຳນວນ 15.726,15 ຕື້ກີບ ຫລື ເທົ່າກັບ 22,53% ຂອງ GDP, ໃນນີ້: ຈາກການຊ່ວຍເຫລືອຂອງຕ່າງປະເທດຈຳນວນ 4.210,04 ຕື້ກີບ ແລະລາຍ

ຮັບພາຍໃນ ຈຳນວນ 11.516,11 ຕື້ກີບ ຫລືເທົ່າກັບ 16,50% ຂອງ GDP (ມູນຄ່າຂອງ GDP 69.800 ຕື້ກີບ).

2/. ຮັບຮອງເອົາຕົວເລກລາຍຈ່າຍງົບປະມານທັງໝົດບໍ່ໃຫ້ເກີນຈຳນວນ 17.831,11 ຕື້ກີບ ຫລືເທົ່າກັບ 25,55% ຂອງ GDP.

3/. ຮັບຮອງເອົາອັດຕາການຂາດດຸນງົບປະມານ 3,02% ຂອງ GDP ດ້ວຍການນຳໃຊ້ແຫລ່ງດຸ່ນດ່ຽງຕົ້ນຕໍ ຈາກການກູ້ຢືມ, ການຊ່ວຍເຫລືອຈາກຕ່າງປະເທດ ແລະ ການຈຳໜ່າຍພັນທະບັດຄັງເງິນ.

ສະພາແຫ່ງຊາດສະເໜີໃຫ້ລັດຖະບານເອົາໃຈໃສ່ໃນການຈັດແບ່ງງົບປະມານດັ່ງນີ້:

1/. ໃຫ້ຈັດແບ່ງງົບປະມານລາຍຈ່າຍປົກກະຕິໄປຕາມກຳນົດໝາຍແບ່ງປັນງົບປະມານ, ເອົາໃຈໃສ່ການແບ່ງປັນຮ່ວງລາຍຈ່າຍບໍລິຫານ, ຊື້ໃໝ່ ແລະ ດັດສົມສິ່ງເສີມໃຫ້ໄປຕາມຄວາມຕ້ອງການທີ່ຈຳເປັນຕົວຈິງຂອງຂະແໜງການ ແລະທ້ອງຖິ່ນ ແຕ່ຕ້ອງເອົາໃຈໃສ່ເປັນພິເສດໃນການຈັດແບ່ງໃຫ້ແກ່ຫົວໜ່ວຍງົບປະມານພື້ນຖານຂັ້ນເມືອງໃຫ້ມີຈຳນວນເພີ່ມຂຶ້ນໃນແຕ່ລະປີ. ຮັບປະກັນການແບ່ງງົບປະມານໃຫ້ຫົວໜ່ວຍງົບປະມານທີ່ສ້າງຕັ້ງຂຶ້ນໃໝ່ໃຫ້ສາມາດເຄື່ອນໄຫວວຽກງານໄດ້ຢ່າງເປັນປົກກະຕິແຕ່ຫົວທີ. ✓

2/. ໃຫ້ລັດຖະບານແຍກງົບປະມານລົງທຶນຂອງລັດໃສ່ໂຄງການບູລິມະສິດຈຳນວນ 1.036 ຕື້ກີບອອກເປັນຮ່ວງໜຶ່ງສະເພາະ ເພື່ອຄຸ້ມຄອງຢ່າງລວມສູນ. ການແບ່ງປັນງົບປະມານລົງທຶນປົກກະຕິ ຕ້ອງຮັບປະກັນການແບ່ງປັນໃຫ້ສູນກາງ ແລະ ທ້ອງຖິ່ນຕາມສັດສ່ວນ 40% ແລະ 60% ຕາມທິດທີ່ໄດ້ຄົ້ນຄວ້າ ແລະ ເອກະພາບຮ່ວມກັນ ລະຫວ່າງຂະແໜງການເງິນ ແລະ ຂະແໜງແຜນການ ແລະ ການລົງທຶນ. ພ້ອມດຽວກັນ ກໍຕ້ອງຮັບປະກັນໂຄງປະກອບການລົງທຶນໃຫ້ຂະແໜງການເສດຖະກິດ 30%, ວັດທະນະທຳ-ສັງຄົມ 35% ແລະພື້ນຖານໂຄງລ່າງເຄຫາສະຖານ 35% ການແບ່ງປັນງົບປະມານຂອງທ້ອງຖິ່ນຕ້ອງຮັບປະກັນການເພີ່ມຂຶ້ນຂອງງົບປະມານຢູ່ຂັ້ນເມືອງ ເພື່ອຕອບສະໜອງແນວທາງນະໂຍບາຍຂອງພັກວ່າດ້ວຍການສ້າງເມືອງໃຫ້ເປັນຫົວໜ່ວຍພັດທະນາເຂັ້ມແຂງຮອບດ້ານ.

3/. ຮັບປະກັນການແບ່ງປັນງົບປະມານຂອງລັດ ໃຫ້ຂົງເຂດສຶກສາ 17%, ສາທາລະນະສຸກ 9%, ຮັບປະກັນໃຫ້ມີແຫລ່ງທຶນພັດທະນາລະບົບປະກັນສັງຄົມ ແລະປະກັນສຸຂະພາບໃຫ້ຄ່ອງຕົວດີກ່ວາເກົ່າ ແລະສາມາດຂະຫຍາຍໃຫ້ກ້ວາງຂວາງລົງສູ່ຮາກຖານ, ປະຕິບັດນະໂຍບາຍຕໍ່ຜູ້ທີ່ມີຜົນງານຄວາມດີຕໍ່ປະເທດຊາດໃຫ້ໄດ້ຕາມແຜນການ.

4/. ຈັດແບ່ງງົບປະມານໃສ່ວຽກງານຄົ້ນຄວ້າວິທະຍາສາດ ແລະ ຖ່າຍທອດເຕັກໂນໂລຊີໃໝ່ ໃຫ້ໄດ້ 1% ຂອງງົບປະມານລົງທຶນຂອງລັດ ໂດຍໃຫ້ສຸມໃສ່ການຄົ້ນຄວ້າວິທະຍາສາດໃນຂົງເຂດການຜະລິດ ເຊັ່ນແນວພັນເຂົ້າ, ພືດ, ສັດ, ກຳມະວິທີການຜະລິດກະສິກຳແບບໃໝ່ ແລະ ຫົວຂໍ້ຕ່າງໆໃນຂົງເຂດສັງຄົມ.

5/. ປັບປຸງວິທີການລາຍງານການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດປະຈຳປີ ເປັນຕົ້ນ ລາຍຈ່າຍລົງທຶນຂອງລັດເຂົ້າໃນໂຄງການໃຫຍ່ລະດັບຊາດ, ໂຄງການບູລິມະສິດຂອງລັດຖະບານ ແລະ ໂຄງການພັດທະນາຊົນນະບົດ ແກ້ໄຂຄວາມທຸກຍາກ. ຕ້ອງສະແດງອອກແຈ້ງເຖິງຄວາມຄືບໜ້າຂອງການຈັດຕັ້ງປະຕິບັດ ແຕ່ລະໂຄງການພ້ອມດ້ວຍຕົວເລກການຊຳລະໂຄງການດັ່ງກ່າວ.

6/. ເອົາໃຈໃສ່ ສຶກສາອົບຮົມແນວຄິດການເມືອງ ໃຫ້ແກ່ພະນັກງານລັດຖະກອນຂະແໜງການເງິນ, ສ້າງ ແລະ ປະຕິບັດລະບອບ, ລະບຽບກົນໄກຕິດຕາມກວດກາຢ່າງເຂັ້ມງວດ, ອັດທຸກຊ່ອງຫວ່າງຂອງການຮົ່ວໄຫລຂອງງົບປະມານ, ແກ້ໄຂບັນດາປະກົດການຫຍໍ້ທໍ້ຕ່າງໆເປັນຕົ້ນ ພະຍາດອາດຍາສິດ, ສວຍໃຊ້ໜ້າທີ່ຕໍາແໜ່ງ ເພື່ອຫາຜົນປະໂຫຍດແກ່ຕົນເອງ, ສ້າງຄວາມຫຍຸ້ງຍາກໃນການບໍລິການປະຊາຊົນ ແລະຜູ້ປະກອບການ ຊຶ່ງກະທົບເຖິງຄວາມເຊື່ອໝັ້ນຂອງປະຊາຊົນ ຕໍ່ການບໍລິຫານລັດທາງດ້ານການເງິນ ແລະກິດໜ່ວງການພັດທະນາ.

7/. ຄົ້ນຄວ້າຊອກວິທີການປັບປຸງການຂຶ້ນແຜນງົບປະມານປະຈໍາສົກປີໃຫ້ໄວ, ຊັດຈນ ແລະສົ່ງໃຫ້ສະພາແຫ່ງຊາດ ໃຫ້ທັນຕາມກໍານົດເວລາທີ່ກົດໝາຍໄດ້ກໍານົດໄວ້.

8/. ມອບໃຫ້ກໍາມາທິການເສດຖະກິດ ແຜນການ ແລະການເງິນສົມທົບກັບກະຊວງການເງິນ ແລະກະຊວງແຜນການ ແລະການລົງທຶນ ໃນການຈັດແບ່ງງົບປະມານລະອຽດ ເພື່ອຜ່ານຄະນະປະຈໍາສະພາແຫ່ງຊາດ.

9/. ມອບໃຫ້ຄະນະປະຈໍາສະພາແຫ່ງຊາດ, ກໍາມາທິການເສດຖະກິດ ແຜນການ ແລະ ການເງິນ ບັນດາກໍາມາທິການອື່ນ, ຄະນະສະມາຊິກສະພາແຫ່ງຊາດປະຈໍາເຂດເລືອກຕັ້ງ, ສະມາຊິກສະພາແຫ່ງຊາດ ເອົາໃຈໃສ່ຕິດຕາມກວດກາການຈັດຕັ້ງປະຕິບັດແຜນງົບປະມານປະຈໍາສົກປີ 2011-2012.

10/. ມອບໃຫ້ອົງການກວດສອບແຫ່ງລັດ ດໍາເນີນການກວດສອບຄືນຂໍ້ແນະນໍາຕ່າງໆຕາມບົດລາຍງານການກວດສອບ ບົດສະຫລຸບຊາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈໍາສົກປີ 2009-2010; ກະກຽມການກວດສອບບົດສະຫລຸບຊາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈໍາສົກປີ 2010-2011 ກໍຄືການປະຕິບັດລະບຽບການເງິນຂອງບັນດາຫົວໜ່ວຍງົບປະມານ ຕາມແຜນການກວດສອບຂອງຕົນ ແລະຕາມການສະເໜີຂອງສະພາແຫ່ງຊາດ ແລະ ລັດຖະບານ.

VII. ກອງປະຊຸມໄດ້ພິຈາລະນາ ແລະຮັບຮອງເອົາການປັບປຸງກົດໝາຍວ່າດ້ວຍສ່ວຍສາອາກອນ ເຊິ່ງມີທັງໝົດ 12 ພາກ 9 ໝວດ 93 ມາດຕາ

VIII. ກອງປະຊຸມໄດ້ພ້ອມກັນປະກອບຄໍາເຫັນ ແລະພິຈາລະນາຮັບຮອງເອົາແຜນການສ້າງ ແລະປັບປຸງກົດໝາຍ ໄລຍະ 5 ປີ ຂອງສະພາແຫ່ງຊາດ ຊຸດທີ VII ມີທັງໝົດ 90 ສະບັບ, ໃນນີ້ສ້າງກົດໝາຍໃໝ່ 48 ແລະປັບປຸງກົດໝາຍ 42 ສະບັບ. ເພື່ອບັນລຸແຜນການສ້າງ ແລະປັບປຸງກົດໝາຍດັ່ງກ່າວນີ້, ສະພາແຫ່ງຊາດ ສະເໜີໃຫ້ລັດຖະບານ ແລະພາກສ່ວນກ່ຽວຂ້ອງເອົາໃຈໃສ່ຕໍ່ກັບກົນໄກຂັ້ນຕອນການສ້າງ ແລະປັບປຸງກົດໝາຍນັບແຕ່ການສ້າງແຜນການ, ການຜ່ານການຮຽບຮຽງ ແລະອື່ນໆໃຫ້ເປັນລະບົບຄົບຊຸດ ຮັບປະກັນໃຫ້ຮ່າງກົດໝາຍມີຄຸນນະພາບກ່ອນນໍາສະເໜີສະພາແຫ່ງຊາດ. ກອງປະຊຸມມອບໃຫ້ຄະນະປະຈໍາສະພາແຫ່ງຊາດຄົ້ນຄວ້າກໍານົດກົນໄກລະບຽບການໃນການພິຈາລະນາຮັບຮອງກົດໝາຍ ເພື່ອເຮັດໃຫ້ກົດໝາຍຖືກຮັບຮອງມີປະສິດທິຜົນ.

IX. ກອງປະຊຸມເຫັນດີຮັບຮອງເອົາທິດທາງວຽກງານ 5 ປີ ຂອງສະພາແຫ່ງຊາດ ຊຸດທີ VII (2011-2015) ໂດຍກໍານົດ 6 ແຜນງານໃຫຍ່; ແຕ່ເພື່ອເຮັດໃຫ້ແຜນງານດັ່ງກ່າວ ໄດ້ຮັບການຈັດຕັ້ງປະຕິບັດຢ່າງມີປະສິດທິຜົນ ແລະເປັນການຍົກສູງບົດບາດຂອງສະພາແຫ່ງຊາດໃຫ້ນັບມື້ສູງຂຶ້ນນັ້ນ, ກອງປະຊຸມມອບໃຫ້

ຄະນະປະຈຳສະພາແຫ່ງຊາດ ເອົາໃຈໃສ່ຊຸກຍູ້ຊີ້ນຳ-ນຳພາການຈັດຕັ້ງປະຕິບັດໃຫ້ເປັນລະບົບ ໂດຍໃຫ້ບັນດາວຽກງານຂອງສະພາແຫ່ງຊາດ ທັນເປັນໂຄງການ, ກິດຈະກຳ ແລະຄາດໝາຍລະອຽດ, ກຳນົດໄລຍະຈັດຕັ້ງປະຕິບັດຢ່າງຊັດເຈນ, ພ້ອມກັນນັ້ນ, ຄະນະປະຈຳສະພາແຫ່ງຊາດ ຕ້ອງເອົາໃຈໃສ່ກວດກາເປັນ ແຕ່ລະໄລຍະຢ່າງຕໍ່ເນື່ອງ ແລະລາຍງານໃຫ້ສະພາແຫ່ງຊາດຮັບຊາບຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ວ່າດ້ວຍສະພາແຫ່ງຊາດ.

X. ເພື່ອຮັບປະກັນໃຫ້ວຽກງານຂອງສະພາແຫ່ງຊາດ ຊຸດທີ VII ໄດ້ເຄື່ອນໄຫວຢ່າງເປັນລະບົບແຕ່ຫົວທີ, ກອງປະຊຸມໄດ້ຮັບຟັງການປະກາດແຈ້ງການຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບການແຕ່ງຕັ້ງບາງຕຳແໜ່ງງານທີ່ຂຶ້ນກັບສະພາແຫ່ງຊາດ ເຊັ່ນ: ການແຕ່ງຕັ້ງຄະນະສະມາຊິກສະພາແຫ່ງຊາດ ປະຈຳ 17 ເຂດເລືອກຕັ້ງ, ການແຕ່ງຕັ້ງຄະນະຫ້ອງວ່າການສະພາແຫ່ງຊາດ ແລະການແຕ່ງຕັ້ງຄະນະສະມາຊິກສະພາແຫ່ງຊາດເພດຍິງ ແລະການແຕ່ງຕັ້ງບັນດາຫົວໜ້າຫ້ອງວ່າການສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງຕ່າງໆໃນທົ່ວປະເທດ.

XI. ກອງປະຊຸມໄດ້ເປັນກຽດຮັບຟັງການໂອ້ລົມ ຂອງທ່ານເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ ປະຊາຊົນ ປະຕິວັດລາວ, ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ເຊິ່ງເປັນທິດຊີ້ນຳທີ່ສຳຄັນໃຫ້ແກ່ການປັບປຸງບູລະນະກົງຈັກການຈັດຕັ້ງ ແລະການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ ຊຸດທີ VII ແລະເປັນແນ່ແຮງກຳລັງໃຈໃຫ້ສະມາຊິກສະພາແຫ່ງຊາດສູ້ຊົນຈັດຕັ້ງປະຕິບັດພາລະບົດບາດຂອງຕົນບັນລຸຄາດໝາຍທີ່ພັກ, ລັດ ແລະປະຊາຊົນມອບໝາຍໃຫ້ຢ່າງມີປະສິດທິຜົນ

XII. ກອງປະຊຸມໄດ້ເປັນກຽດຕ້ອນຮັບ ທ່ານ ຫງວຽນ ຟູຈ່ອງ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກຄອມມູນິດຫວຽດນາມ, ປະທານສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ສັງຄົມນິຍົມຫວຽດນາມ ເຊິ່ງໄດ້ນຳເອົາໄມຕີຈິດມິດຕະພາບອັນຫຍິ່ງໃຫຍ່, ຄວາມສາມັກຄີແບບພິເສດ ແລະການຮ່ວມມືຮອບດ້ານທີ່ເປັນມູນເຊື້ອອັນດີງາມຈາກພັກ, ລັດ ແລະປະຊາຊົນຫວຽດນາມອ້າຍນ້ອງ, ເພື່ອນມິດຍຸດທະສາດ ທີ່ບໍລິສຸດຜຸດຜ່ອງຂອງປະຊາຊົນລາວ ມາສູ່ກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ VII.

ກອງປະຊຸມເຫັນວ່າການພັດທະນາເສດຖະກິດ-ສັງຄົມ ໃນ 5 ປີຕໍ່ໜ້ານີ້ ມີຂໍ້ສະດວກຫຼາຍຂຶ້ນ, ແຕ່ຍັງມີຂໍ້ຫຍຸ້ງຍາກສິ່ງທ້າທາຍຫຼາຍຢ່າງ. ສະນັ້ນ, ກອງປະຊຸມຮຽກຮ້ອງມາຍັງທົ່ວພັກ, ທົ່ວກອງທັບ ແລະທົ່ວປວງຊົນລາວບັນດາເຜົ່າ ຈົ່ງໄດ້ເພີ່ມທະວີນ້ຳໃຈຮັກຊາດ, ຄວາມສາມັກຄີເປັນເອກະພາບ, ນ້ຳໃຈເປັນເຈົ້າຕົນເອງເພິ່ງຕົນເອງ ແລະສ້າງຄວາມເຂັ້ມແຂງດ້ວຍຕົນເອງບຸກບືນຜ່ານຜ່າຄວາມຫຍຸ້ງຍາກ, ຕັ້ງໜ້າເຂົ້າຮ່ວມໃນການຈັດຕັ້ງປະຕິບັດຜັນຂະຫຍາຍແນວທາງຂອງພັກໂດຍສະເພາະມະຕິກອງປະຊຸມໃຫຍ່ຄັ້ງທີ IX ຂອງພັກເຂົ້າສູ່ຊີວິດສັງຄົມໃຫ້ເປັນຮູບປະທຳ, ຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີຄັ້ງທີ VII ແລະເປົ້າໝາຍບັນດາສະຫະສະຫວັດໃນແຕ່ລະສົກປີໃຫ້ບັນລຸຕາມຄາດໝາຍວາງໄວ້; ຮຽກຮ້ອງມາຍັງພີ່ນ້ອງຮ່ວມຊາດ ທີ່ດຳລົງຊີວິດຢູ່ຕ່າງປະເທດ ຈົ່ງໄດ້ຫັນໜ້າມາສູ່ປະເທດຊາດອັນແສນຮັກຂອງຕົນ ເພື່ອໃຫ້ການສະໜັບສະໜູນ ແລະປະກອບສ່ວນເຂົ້າຮ່ວມໃນການການສ້າງສາພັດທະນາປະເທດຊາດໃຫ້ຈະເລີນກ້າວໜ້າ; ຮຽກຮ້ອງມາຍັງຊາວຕ່າງດ້າວ ແລະຊາວຕ່າງປະເທດທີ່ດຳລົງຊີວິດ, ທຳມາຫາກິນຢູ່ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຈົ່ງໃຫ້ການຮ່ວມມືຮ່ວມແຮງຮ່ວມໃຈກັບພັກ, ສະພາແຫ່ງ

ຊາດ, ລັດຖະບານ ແລະປະຊາຊົນລາວບັນດາເຜົ່າໃນການປະຕິບັດລັດຖະທຳມະນູນ ແລະລະບຽບກົດໝາຍ ປະກອບສ່ວນເຂົ້າໃນການສ້າງລັດແຫ່ງກົດໝາຍໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ. ທັງໝົດນັ້ນເພື່ອສ້າງປະເທດລາວໃຫ້ມັ່ງຄັ່ງເຂັ້ມແຂງ, ປະຊາຊົນຮັ່ງມີຜາສຸກ, ສັງຄົມມີຄວາມສາມັກຄີປອງດອງ, ປະຊາທິປະໄຕຍຸຕິທຳ ແລະສີວິໄລ.

ກອງປະຊຸມສະໄໝສາມັນເທື່ອທີ່ 13 ຂອງສະພາແຫ່ງຊາດ ຊຸດທີ VII

ປະທານ

ປານີ ຢາທໍ່ຕູ້

ເອກະສານຊ້ອນທ້າຍ 1

<u>ການດັດແກ້ ລາຍຮັບ:</u>

ສະພາແຫ່ງຊາດ ເຫັນດີດັດແກ້ ລາຍຮັບທັງໝົດ 133,51 ຕື້ ກີບ ໃຫ້ເປັນ ລາຍຮັບຂອງງົບປະມານສົກປີ 2010-2011 ໃນ 3 ລາຍການດັ່ງນີ້:

1. ລາຍຮັບຄ່າພາສີ-ອາກອນ ລົດທີ່ນຳເຂົ້າມາຮັບໃຊ້ໃນງານມະຫາກຳກິລາຊີເກມ ຄັ້ງທີ 25 ຈຳນວນ 177 ຄັນ, ຊຶ່ງຜູ້ນຳເຂົ້າໄດ້ມອບເປັນລົດໃຫ້ລັດ ຈຳນວນ 33 ຄັນ, ມູນຄ່າ 1,46 ລ້ານໂດລາສະຫະລັດ ຫຼື ເທົ່າກັບ 11,83 ຕື້ກີບ.
2. ບ້ວງເງິນ 20% ຈາກການຊ່ວຍເຫລືອລ້າ ດັດແກ້ມະຫາພາກ ຂອງທະນາຄານພັດທະນາອາຊີ (ADB) ເພື່ອນຳໃຊ້ເຂົ້າໃນການກໍ່ຕັ້ງກອງທຶນສົ່ງເສີມ ແລະພັດທະນາວິສາຫະກິດຂະໜາດນ້ອຍ ແລະຂະໜາດກາງ ຈຳນວນ 2 ລ້ານໂດລາສະຫະລັດ ຫຼື ເທົ່າກັບ 16,20 ຕື້ກີບ.
3. ລາຍຮັບວິຊາການຂອງບັນດາກະຊວງ, ອີງການທຽບເທົ່າ ຈຳນວນ 105,48 ຕື້ກີບ.